**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດຂອງພະຍາດ COVID-19

ເລກທີ 00001444 /ຕປທ.ສພກ
ນະຄອນຫຼວງວຽງຈັນ,ວັນທີ 01 ມິຖຸນາ 2020

# ຄຳແນະນຳ

## ສຳລັບການເດີນທາງເຂົ້າ-ອອກ ສປປ ລາວໃນໄລຍະດຳເນີນມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19

- ອີງຕາມຂໍ້ຕົກລົງ ວ່າດ້ວຍ ການແຕ່ງຕັ້ງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດອັບເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ສະບັບເລກທີ 09/ນຍ, ລົງວັນທີ 03 ກຸມພາ 2020;
- ອີງຕາມຂໍ້ຕົກລົງ ວ່າດ້ວຍ ການແບ່ງຄວາມຮັບຜິດຊອບຂອງຄະນະຕິດຕາມຜົນກະທົບ ແລະ ຜັນຂະຫຍາຍມາດຕະການດ້ານເສດຖະກິດ ເພື່ອແກ້ໄຂຜົນກະທົບຂອງການລະບາດພະຍາດ COVID-19 ສະບັບເລກທີ 001/ສພກ, ລົງວັນທີ 08 ເມສາ 2020;
- ອີງຕາມແຈ້ງການວ່າດ້ວຍການສືບຕໍ່ປະຕິບັດບັນດາມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສະບັບເລກທີ 597/ຫສນຍ, ລົງວັນທີ 29 ພຶດສະພາ 2020;

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂອງກະຊວງການຕ່າງປະເທດ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ເນື່ອງຈາກວ່າ ລັດຖະບານລາວ ຍັງສືບຕໍ່ປິດດ່ານຊາຍແດນທາງບົກ ແລະ ທາງອາກາດໃນຂອບເຂດທົ່ວປະເທດ ເພື່ອປ້ອງກັນ ແລະ ສະກັດກັ້ນການລະບາດຂອງພະຍາດ COVID-19 ຢູ່ ສປປ ລາວ, ສະນັ້ນ, ບຸກຄົນ ຫຼື ນິຕິບຸກຄົນທີ່ມີຈຸດປະສົງຈະເດີນທາງເຂົ້າ-ອອກ ສປປ ລາວ ຈະຕ້ອງໄດ້ປະຕິບັດຕາມຂັ້ນຕອນ ແລະ ມາດຕະການ ດັ່ງລຸ່ມນີ້:

### I. <u>ຂາເຂົ້າ:</u>

#### 1. ກ່ອນຈະເດີນທາງເຂົ້າ ສປປ ລາວ

#### 1.1. ຂັ້ນຕອນການສະເໜີຂໍອະນຸຍາດເຂົ້າ ສປປ ລາວ:

1.1.1. ກະຊວງ ແລະ ອົງການທຽບເທົ່າ ທີ່ມີຄວາມຈຳເປັນອັນຮີບດ່ວນຮັບເອົາຊ່ຽວຊານ ແລະ ນັກສຶກສາຕ່າງປະເທດ ໃຫ້ສະເໜີເປັນລາຍລັກອັກສອນ ມາຍັງຫ້ອງການກອງເລຂາຄະນະສະເພາະກິດຂັ້ນສູນກາງ (ສະຖານທີ່ປະຈຳການ ກະຊວງສາທາລະນະສຸກ);

1.1.2. ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຄວາມຈຳເປັນຈະເອົານັກລົງທຶນ ແລະ ນັກທຸລະກິດ ເຂົ້າ ສປປ ລາວ ເພື່ອດຳເນີນການສຶກສາການລົງທຶນ ຫຼື ເຊັນສັນຍາ ຕ້ອງດຳເນີນຕາມຂັ້ນຕອນຂອງຂະແໜງການທີ່ກ່ຽວຂ້ອງ ກ່ອນຈະສະເໜີເປັນລາຍລັກອັກສອນ ເຖິງຫ້ອງການກອງເລຂາຄະນະສະເພາະກິດຂັ້ນສູນກາງ, ເອກະສານປະກອບມີ:

- ໃບອະນຸຍາດລົງທຶນພາຍໃນ ແລະ ຕ່າງປະເທດ;
- ໃບທະບຽນວິສາຫະກິດ;
- ໃບຢັ້ງຢືນການມອບພັນທະອາກອນປະຈຳປີ;

- ໃບສະເໜີຈາກກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ຫຼື ພະແນກແຜນການ ແລະ ການລົງທຶນ ຂອງແຂວງ/ ນະຄອນຫຼວງ ເຖິງກົມກົງສຸນ, ກະຊວງການຕ່າງປະເທດ ໂດຍຜ່ານກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ, ກະຊວງປ້ອງກັນຄວາມສະຫງົບ ເພື່ອຂໍວີຊາ;
- ໃບຢັ້ງຢືນການຈອງໂຮງແຮມ ທີ່ຄະນະສະເພາະກິດກຳນົດໄວ້;
- ໜັງສືສະເໜີເຖິງ ຫ້ອງການຄະນະສະເພາະກິດສູນກາງ ຕ້ອງລະບຸລາຍລະອຽດກ່ຽວກັບ ລາຍຊື່, ວັນເວລາ, ດ່ານທີ່ຈະເດີນທາງເຂົ້າ, ພາຫະນະໃນການເດີນທາງ, ສະຖານທີ່ຈະເຂົ້າຈຳກັດບໍລິເວນ, ປະເທດທີ່ຈະເດີນທາງຜ່ານ ແລະ ເຫດຜົນຄວາມຈຳເປັນຮີບດ່ວນຂອງການເດີນທາງເຂົ້າ ສປປ ລາວ.

1.1.3. ບໍລິສັດ ຫຼື ເຈົ້າຂອງໂຄງການຢູ່ ສປປ ລາວ ທີ່ມີຄວາມຈຳເປັນອັນຮີບດ່ວນນຳເຂົ້າແຮງງານ ແລະ ວິຊາການຕ່າງປະເທດ ເພື່ອຮັບໃຊ້ບັນດາກິດຈະການ ແລະ ໂຄງການ ຕ້ອງດຳເນີນຕາມຂັ້ນຕອນຂອງຂະແໜງການທີ່ກ່ຽວຂ້ອງ ກ່ອນຈະສະເໜີເປັນລາຍລັກອັກສອນ ເຖິງຫ້ອງການຄະນະສະເພາະກິດຂັ້ນສູນກາງ, ເອກະສານປະກອບມີ:

- ໃບອະນຸຍາດລົງທຶນຢູ່ ສປປ ລາວ;
- ໃບທະບຽນວິສາຫະກິດ;
- ໃບຢັ້ງຢືນການມອບພັນທະອາກອນປະຈຳປີ;
- ໃບອະນຸຍາດໂກຕານຳໃຊ້ແຮງງານຕ່າງປະເທດ ແລະ ໃບອະນຸຍາດນຳເຂົ້າແຮງງານຕ່າງປະເທດ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ໃບສະເໜີຈາກຜູ້ປະກອບການ ເຖິງ ກົມກົງສຸນ, ກະຊວງການຕ່າງປະເທດ ໂດຍຜ່ານກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ, ກະຊວງປ້ອງກັນຄວາມສະຫງົບ ເພື່ອຂໍວີຊາ;
- ໃບຢັ້ງຢືນການຈອງສະຖານທີ່ຈຳກັດບໍລິເວນ: ໂຮງແຮມ ຫຼື ສູນຈຳກັດບໍລິເວນທີ່ຄະນະສະເພາະກິດກຳນົດໄວ້;
- ໜັງສືສະເໜີເຖິງຫ້ອງການຄະນະສະເພາະກິດສູນກາງ ຕ້ອງລະບຸລາຍລະອຽດກ່ຽວກັບ ລາຍຊື່, ວັນເວລາ, ດ່ານທີ່ຈະເດີນທາງເຂົ້າ, ພາຫະນະໃນການເດີນທາງ, ສະຖານທີ່ຈະເຂົ້າຈຳກັດບໍລິເວນ, ປະເທດທີ່ຈະເດີນທາງຜ່ານ ແລະ ເຫດຜົນຄວາມຈຳເປັນຮີບດ່ວນຂອງການເດີນທາງເຂົ້າ ສປປ ລາວ.

1.1.4. ສຳລັບພົນລະເມືອງລາວ ທີ່ມີຈຸດປະສົງຢາກເດີນທາງກັບ ສປປ ລາວ ໃຫ້ລົງທະບຽນຢູ່ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ຢູ່ປະເທດທີ່ຕົນອາໃສຢູ່ ໂດຍແຈ້ງຂໍ້ມູນລະອຽດ (ສາເຫດການຕົກຄ້າງ, ວັນ, ເວລາ, ດ່ານທີ່ມີຈຸດປະສົງຈະເດີນທາງເຂົ້າ,...) ເພື່ອຄົ້ນຄວ້າພິຈາລະນາ ຊອກຫາຊ່ອງທາງໃນການອຳນວຍຄວາມສະດວກໃນການເດີນທາງກັບ ສປປ ລາວ;

1.1.5. ສຳນັກງານຜູ້ຕາງໜ້າການທູດ ແລະ ອົງການຈັດຕັ້ງສາກົນຕ່າງໆ ທີ່ມີຄວາມຈຳເປັນອັນຮີບດ່ວນຮັບເອົານັກການທູດ ແລະ ພະນັກງານ ເຂົ້າມາປະຕິບັດໜ້າທີ່ທັງໄລຍະສັ້ນ ແລະ ໄລຍະຍາວ ຢູ່ ສປປ ລາວ ໃຫ້ສະເໜີເປັນລາຍລັກອັກສອນ ມາຍັງກະຊວງການຕ່າງປະເທດ;

1.1.6. ທຸກການສະເໜີເຂົ້າ ສປປ ລາວ ຕ້ອງສົ່ງເຖິງຫ້ອງການຄະນະສະເພາະກິດສູນກາງລ່ວງໜ້າຢ່າງໜ້ອຍ 07 ວັນ.

**1.2. ເງື່ອນໄຂຂອງຄົນຕ່າງປະເທດ ທີ່ຈະສາມາດເດີນທາງເຂົ້າ ສປປ ລາວ:**

1.2.1. ບຸກຄົນທີ່ມີວີຊາ (ທີ່ຍັງມີອາຍຸນຳໃຊ້) ສາມາດເດີນທາງເຂົ້າມາ ສປປ ລາວ;

1.2.2. ສຳລັບບຸກຄົນທີ່ຍັງບໍ່ທັນມີວີຊາເຂົ້າ ສປປ ລາວ ຈະຕ້ອງປະກອບຄຳຮ້ອງຂໍວີຊາທີ່ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ຢູ່ປະເທດຕົ້ນທາງ;

1.2.3. ທຸກຄົນຕ້ອງໄດ້ກວດສຸຂະພາບຈາກແພດ ແລະ ກວດວິເຄາະຫາເຊື້ອພະຍາດ COVID-19 ດ້ວຍວິທີ RT-PCR ເພື່ອໄດ້ໃບຢັ້ງຢືນຈາກປະເທດຕົ້ນທາງ ອອກໃຫ້ບໍ່ເກີນ 72 ຊົ່ວໂມງ ກ່ອນການເດີນທາງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ເວລາມາເຖິງດ່ານຊາຍແດນສາກົນ ແລະ ສະໜາມບິນສາກົນ.

## 2. ເວລາມາເຖິງດ່ານສາກົນຊາຍແດນ ແລະ ສະໜາມບິນສາກົນ

2.1. ທຸກຄົນຈະຕ້ອງຜ່ານການກວດແທກອຸນຫະພູມ;

2.2. ປະກອບແບບຟອມຂໍ້ມູນສຸຂະພາບໃຫ້ຖືກຕ້ອງ ແລະ ຄົບຖ້ວນ;

2.3. ແຈ້ງໃບຢັ້ງຢືນກວດສຸຂະພາບຈາກແພດ ແລະ ກວດວິເຄາະຫາເຊື້ອພະຍາດ COVID-19 ໃຫ້ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ;

2.4. ແຈ້ງເຂົ້າ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກຳນົດໄວ້ ໂດຍໃຫ້ຮັກສາໄລຍະຫ່າງ 1-2 ແມັດ;

2.5. ກໍລະນີກວດພົບວ່າມີໄຂ້ ຫຼື ອາການສົງໄສກ່ຽວກັບພະຍາດ COVID-19 ຈະໄດ້ສົ່ງເຂົ້າໄປແຍກປ່ຽວຢູ່ໂຮງໝໍ ເພື່ອເກັບຕົວຢ່າງມາກວດວິເຄາະຫາເຊື້ອພະຍາດ COVID-19;

2.6. ກໍລະນີກວດພົບວ່າ ບໍ່ມີໄຂ້ ຫຼື ບໍ່ມີອາການສົງໄສກ່ຽວກັບພະຍາດ COVID-19 ຈະໄດ້ແນະນຳໃຫ້ໄປຈຳກັດບໍລິເວນຢູ່ຕາມສະຖານທີ່ຖືກກຳນົດໄວ້ ເພື່ອເກັບຕົວຢ່າງມາກວດວິເຄາະຫາເຊື້ອພະຍາດ COVID-19.

## 3. ເວລາຜ່ານດ່ານເຂົ້າມາ ສປປ ລາວ

3.1. ທຸກຄົນຈະຕ້ອງຖືກສົ່ງໄປຈຳກັດບໍລິເວນ 14 ວັນ ຢູ່ໂຮງແຮມ ຫຼື ສູນຈຳກັດບໍລິເວນ ທີ່ຄະນະສະເພາະກິດຂັ້ນສູນກາງ ແລະ ທ້ອງຖິ່ນໄດ້ກຳນົດໄວ້ຢ່າງເຂັ້ມງວດ ແລະ ເກັບຕົວຢ່າງມາວິເຄາະຫາເຊື້ອພະຍາດ COVID-19;

3.2. ທຸກຄົນທີ່ໄດ້ເຂົ້າຈຳກັດບໍລິເວນຢູ່ໂຮງແຮມທີ່ຄະນະສະເພາະກິດກຳນົດໄວ້ ຈະຕ້ອງຮັບຜິດຊອບໃຊ້ຈ່າຍຄ່າກິນຢູ່-ພັກເຊົາ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ດ້ວຍຕົນເອງ;

3.3. ພາຍຫຼັງຈຳກັດບໍລິເວນ ຄົບກຳນົດ 14 ວັນແລ້ວ ຖ້າບໍ່ມີອາການຜິດປົກກະຕິ, ແພດຈະອອກໃບຢັ້ງຢືນໃຫ້ເພື່ອເປັນຫຼັກຖານ ສາມາດອອກໄປພັກຢູ່ເຮືອນຂອງຕົນ ແລະ ເຄື່ອນໄຫວເຮັດວຽກໄດ້ຕາມປົກກະຕິ ແຕ່ຕ້ອງສືບຕໍ່ປະຕິບັດມາດຕະການປ້ອງກັນການຕິດເຊື້ອ;

3.4. ສຳລັບນັກການທູດ, ພະນັກງານອົງການຈັດຕັ້ງສາກົນ ແລະ ສະມາຊິກຄອບຄົວ ຜູ້ທີ່ເດີນທາງມາຈາກ ຫຼື ເດີນທາງຜ່ານ ປະເທດທີ່ຍັງມີການແຜ່ລະບາດຂອງພະຍາດ COVID-19 ຕ້ອງໄດ້ເກັບຕົວຢ່າງກວດຫາເຊື້ອພະຍາດ COVID-19 ຢູ່ສູນວິເຄາະລະບາດວິທະຍາແຫ່ງຊາດ ແລະ ຈຳກັດບໍລິເວນຕົນເອງ ຢູ່ທີ່ພັກຂອງສະຖານທູດ ຈົນຄົບກຳນົດ 14 ວັນ ພ້ອມທັງລາຍງານການຕິດຕາມອຸນຫະພູມ, ຖ້າມີອາການໄຂ້, ໄອ, ເຈັບຄໍ ຫຼື ຫາຍໃຈຝືດ ຕ້ອງແຈ້ງ ສາຍດ່ວນຄະນະສະເພາະກິດ COVID-19 ຫລື ກົມພິທີການທູດ, ກະຊວງການຕ່າງປະເທດ;

3.5. ຖ້າບຸກຄົນໃດບໍ່ປະຕິບັດຕາມຄຳແນະນຳທີ່ຄະນະສະເພາະກິດວາງອອກຈະຖືກດຳເນີນການ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**II. ຂາອອກ:**

1. ສຳລັບພົນລະເມືອງລາວ ທີ່ມີຄວາມຈຳເປັນຮີບດ່ວນເດີນທາງໄປຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃນການເດີນທາງ ແຕ່ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຂອງປະເທດປາຍທາງ.
2. ສຳລັບພົນລະເມືອງຕ່າງປະເທດ ທີ່ມີຈຸດປະສົງເດີນທາງອອກຈາກ ສປປ ລາວ ຕ້ອງໄດ້ສະເໜີຜ່ານສະຖານເອກອັກຄະລັດຖະທູດຂອງປະເທດຕົນ ແລະ ຕ້ອງໄດ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ຂອງປະເທດປາຍທາງ;
3. ສະຖານເອກອັກຄະລັດຖະທູດທີ່ກ່ຽວຂ້ອງ ຕ້ອງເຮັດໜັງສືສະເໜີມາຍັງ ກະຊວງການຕ່າງປະເທດ ພ້ອມແຈ້ງລາຍຊື່, ເລກທີໜັງສືຜ່ານແດນ, ວັນເວລາ, ດ່ານທີ່ຈະເດີນທາງອອກ, ພາຫະນະໃນການເດີນທາງ ເພື່ອພິຈາລະນາອຳນວຍຄວາມສະດວກ;

**ໝາຍເຫດ**: ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 02 ຫາ 30 ມິຖຸນາ 2020 ແລະ ປ່ຽນແທນຄຳແນະນຳສະບັບເລກທີ 1380 /ຕປທ.ສພກ ລົງວັນທີ 15 ພຶດສະພາ 2020.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດ ຢ່າງເຂັ້ມງວດດ້ວຍ.

ຮອງລັດຖະມົນຕີ
ຄະນະສະເພາະກິດຂັ້ນສູນກາງ
ຫົວໜ້າຄະນະສະເພາະກິດກະຊວງການຕ່າງປະເທດ

ທອງສະຫວັນ ພົມວິຫານ

Unofficial translation

**LAO PEOPLE'S DEMOCRATIC REPUBLIC**
**PEACE INDEPENDENCE DEMOCRACY UNITY PROSPERITY**

Ministry of Foreign Affairs
Task Force Committee for
Prevention, Control and
Response to COVID-19 Pandemic

No. 1444/MOFA.TC
Vientiane Capital, dated 01 June 2020

# Travel advisory

## For entry and exit of Lao PDR during the implementation of measures to prevent, control and respond to the COVID-19 pandemic

- Pursuant to the decision of the Government to establish a Task Force Committee for Prevention, Control and Response to the COVID-19 pandemic No. 09/PMO dated 03 February 2020.
- Pursuant to the division of responsibility of the Economic Task Force Committee for monitoring and proposing measures to addressing the impacts of COVID-19 No. 001/TFC, dated 8 April 2020;
- Pursuant to the Notice of the Prime Minister's Office on continuing to implement measures to prevent, control, contain and respond to the COVID-19 pandemic, No. 597/PMO dated 29 May 2020.

The Task Force Committee of the Ministry of Foreign Affairs for Prevention, Control and Response to the COVID-19 pandemic has the honor to inform that the Lao Government decides to continue closing all border checkpoints to prevent and contain the COVID-19 pandemic in the country. Against this backdrop, any individual and juristic person wishing to enter or exit Lao PDR must follow the following steps and procedures:

## I. Entry

### 1. Prior to the departure to the Lao PDR

#### 1.1. Steps for requesting permission to enter the Lao PDR

1.1.1. Any Ministry and Agency with an essential and urgent need to bring in experts and foreign students can do so by proposing in writing to the head of Secretariat of National Task Force Committee (located in the Ministry of Public Health);

1.1.2. Any individual and juristic person with an essential and urgent need to bring in investors and entrepreneurs for business feasibility study or contract signing needs to propose in writing to the Head of Secretariat of the National Task Force Committee and must attach the following documents:

- Domestic and foreign investment license;
- Enterprise registration certification;
- Proof of annual tax payment;
- Letter requesting for visa from the Investment Promotion Department, Ministry of Planning and Investment or from Provincial/Vientiane Capital Planning and Investment Department addressed to Consular Department, Ministry of Foreign Affairs, but it has to go through the Department of Immigration, Ministry of Public Security before its submission to Consular Department;

- Proof of booking confirmation at a venue designated by the Task Force Committee for quarantine;
- The letter addressed to the head of Secretariat of the National Task Force Committee shall provide details on names, date, point of entry, mode of transportation, venue for self-quarantine, transit country (if any) and reasons for the urgent entry to the Lao PDR.

1.1.3. Companies or project owners in the Lao PDR with an essential and urgent need to bring in foreign workers and technicians for their businesses or projects can do so. First, they have to follow the normal procedures as required under the relevant laws and regulations for bringing in foreign workers and after that submit a request in writing to the head of Secretariat of the National Task Force Committee, and must attach the following documents:
- Investment license in Laos;
- Enterprise registration;
- Proof of annual tax payment;
- Quota permission to employ foreign workers and license to bring in foreign workers from Ministry of Labour and Social Welfare;
- A Letter requesting for visa from business/project owner addressed to Consular Department, Ministry of Foreign Affairs, but it has to go through the Department of Immigration, Ministry of Public Security before its submission to the Consular Department;
- Proof of booking confirmation at a venue designated by the Task Force Committee for quarantine;
- The letter addressed to the head of Secretariat of the National Task Force Committee shall provide details on names, date, point of entry, mode of transportation, venue for self-quarantine, transit country (if any) and reasons for the urgent entry to the Lao PDR.

1.1.4. For Lao nationals who wish to return to the Lao PDR, they need to register at the Lao Embassy or Consulate General at the country of their residence and provide necessary information (why he/she has been stranded, date, time and point of entry, etc.) for consideration and facilitation by the latter;

1.1.5. A diplomatic mission and international organization with an essential and urgent need to bring in its diplomats or staffs to carry out its duties both on a short or long term can do so by proposing in writing to the Ministry of Foreign Affairs;

1.1.6. All requests for entry into the Lao PDR shall reach the head of Secretariat of the National Task Force Committee in advance of at least 07 days prior to the proposed date of departure.

**1.2. Requirements for foreigners prior entering the Lao PDR upon receiving entry authorization.**

1.2.1. Individual with valid entry visa (not yet expired) can enter the Lao PDR;

1.2.2. For those who do not have an entry visa to the Lao PDR must apply for visa at the Lao Embassy or Consulate General at the country of departure;

1.2.3. Every individual must have a negative test for COVID-19 certification using RT-PCR from a trustworthy medical institution of no more than 72 hours before departure to the Lao PDR.

**2. On arrival at a border checkpoint or airport**

2.1. Every Individual must go through a body temperature check;

2.2. Duly complete a health declaration form;

2.3. Present the proof of negative test of COVID-19 to the immigration officer;

2.4. Check in at immigration counter as required by the law and regulations with maintaining physical distancing of 1-2 meters;

2.5. In case of an individual found to have fever or suspicious symptoms of COVID-19, he/she will be directly sent to designated hospitals for quarantine and COVID-19 testing;

2.6. In case of no fever or suspicious symptoms of COVID-19, he/she will be recommended to do self-quarantine at a government designated venue and taken COVID-19 testing.

**3. After entering the Lao PDR**

3.1. Every individual is subject to a strict 14-day self-quarantine at a hotel or center designated by the Task Force Committees at the central and local levels;

3.2. Every individual who takes self-quarantine at the hotel designated by the Task Force Committee shall bear all expenses on food, room and other accidental cost;

3.3. After completion of a 14-day self-quarantine and without any symptoms of COVID-19 infection, the individual will receive a certificate for him/her to stay at their home and live their normal lives, but they also must continue to strictly implement the prevention measures as advised by the Task Force Committee;

3.4. For diplomats, staff of international organizations and their family members travelling from or through country of ongoing COVID-19 outbreak are required to undergo COVID-19 testing upon arrival at the National Centre for Laboratory and Epidemiology and take 14-day self-quarantine at their residences as well as reporting the body temperature monitoring. If there are any suspicious symptoms of COVID-19 infection such as fever, coughing, sore throat or breathing difficulty, they have to report to the Task Force Committee via its hotline or Protocol Department, Ministry of Foreign Affairs;

3.5. For those who violated the prevention measures as provided by the Task Force Committee for COVID-19 will be prosecuted according to the laws and regulations of the Lao PDR.

**II. Departure**

1. For Lao nationals who need to travel abroad are able to do so provided that it is permissible by the country of destination and they have to fulfil the requirements under the law and regulations of the country of destination.
2. For foreign nationals who need to exit the Lao PDR, they need to propose through their Embassy and follow the requirements provided by the country of destination;
3. The respective Embassy has to inform the Ministry of Foreign Affairs in writing together with the list of individuals who wish to depart the Lao PDR with details of passport number, date of departure, exit point, mode of transportation and other necessary information for consideration and facilitation by the latter.

**Remark:** This Travel Advisory entered into force from 02nd to 30th June 2020 and replaced the previous Travel Advisory No. 1380/MoFA.TC, dated 15 May 2020.

Therefore, it is the honor to notify you, for your kind information and strict implementation of this notice.

Deputy Minister
Member of the Central Task Force Committee
Head of Task Force Committee of the Ministry of Foreign Affairs

*(Signed and sealed)*

Thongsavanh PHOMVIHANE